ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກອງທຶນຫຼຸດຜ່ອນຄວາມທຸກຍາກ

ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ — ເລກທີ 0449/ປຊກ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2026

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ພິມປຶ້ມບັນທຶກກ່ຽວກັບການເງິນ ກຊກ ແລະ ຄບກ ຂອງກອງທຶນບ້ານ ຊຸດທີ 2

ເພື່ອແຈກຢາຍໃຫ້ບ້ານເປົ້າໝາຍຂອງໂຄງການ ປຊກ

ສັນຍາເລກທີ: CLEAR/Record Financial Books/G-S/2026 (G-004)

ເຖິງ: ..............................................................................................................

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດພິມປຶ້ມບັນທຶກກ່ຽວກັບການເງິນ ກຊກ ແລະ ຄບກ ຂອງກອງທຶນບ້ານ ຊຸດທີ 2 ເພື່ອແຈກຢາຍໃຫ້ບ້ານເປົ້າໝາຍຂອງໂຄງການ ປຊກ, ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສຳລັບການຈັດພິມປຶ້ມທີ່ໄດ້ລະບຸໄວ້ຂ້າງເທິງ, ໄລຍະເວລາໃນການສົ່ງມອບ ແມ່ນ 45 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການສັ່ງພິມດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສັ່ງພິມ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 10 ມິຖຸນາ 2026 ທີ່ຫ້ອງການໂຄງການ ປຊກ, ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ, ວັນທີ 10 ມິຖຸນາ 2025 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ ທີ່ຫ້ອງການ ປຊກ ຕັ້ງຢູ່ໃນຫ້ອງການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ປສຊ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 ໜ່ວຍງານຈັດຊື້.

ຮກ. ຜູ້ອຳນວຍການ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກອງທຶນຫຼຸດຜ່ອນຄວາມທຸກຍາກ

ປອ. ວົງປະພັນ ມະນີວົງ